**ບົດກ່າວປິດ**
**ທ່ານ ນ. ພອນວັນ ອຸທະວົງ ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ**
**ໃນປະຊຸມ ປະທານ ແລະປະທານຮ່ວມໜ່ວຍງານຂະແໜງການ ເພື່ອປຶກສາຫາລື ກັບ ຄູ່ຮ່ວມພັດທະນາ**

*ໃນວັນທີ 3 ກໍລະກົດ 2024, ທີ່ ໂຮງແຮມ ລາວ ປູາຊາ ນະຄອນຫຼວງວຽງຈັນ*

---------------------------

**ຮຽນ:**
- **ທ່ານ ບັກໂຄເດັຍ ເບີຄານ່ອຟ ຜູ້ປະສານງານອົງການສະຫະປະຊາຊາດ ປະຈໍາ ສປປ ລາວ ທີ່ນັບຖື;**
- **ບັນດາ ທ່ານ ຮອງລັດຖະມົນຕີ ທີ່ເຄົາລົບນັບຖື;**
- **ບັນດາທ່ານທູດ, ຜູ້ຕາງໜ້າອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ;**
- **ນັບຖື-ຮັກແພງ ບັນດາທ່ານຜູ້ຕາງໜ້າຈາກກະຊວງ/ຂະແໜງການ;**
- **ບັນດາທ່ານແຂກທີ່ມີກຽດ ທ່ານ ຍິງ ແລະທ່ານຊາຍ ທີ່ນັບຖື ແລະຮັກແພງ.**

ມາຮອດນີ້, ກອງປະຊຸມ ຂອງພວກເຮົາ ກໍ່ໃກ້ຈະປິດລົງແລ້ວ, ຂ້າພະເຈົ້າຕາງໜ້າ ໃຫ້ຄະນະປະທານ ອີກເທື່ອໜຶ່ງ ສະແດງຄວາມຂອບໃຈ ແລະ ຊົມເຊີຍ ມາຍັງບັນດາ ຮອງລັດຖະມົນຕີ, ບັນດາທ່ານທູດ, ຫົວໜ້າອົງການຈັດຕັ້ງສາກົນ, ຜູ້ຕາງໜ້າຈາກກະຊວງຂະແໜງການ ທີ່ໄດ້ເຂົ້າຮ່ວມ ແລະ ປະກອບຄໍາເຫັນ ທີ່ມີເນື້ອໃນອັນສໍາຄັນ ໃນກອງປະຊຸມຄັ້ງນີ້; ເຊິ່ງບັນດາຄໍາຄິດເຫັນດັ່ງກ່າວ ພວກເຮົາຈະນໍາໄປພິຈະລະນາ ເພື່ອກະກຽມທາງດ້ານເນື້ອໃນ ແລະ ຮູບແບບຂອງ ກອງປະຊຸມໂຕະມົນ ປະຈໍາປີ 2024.

ຜ່ານການຮັບຟັງການປຶກສາຫາລື ແລະປະກອບຄໍາເຫັນ ໃນກອງປະຊຸມມື້ນີ້ ເຫັນວ່າ: ມີຫຼາກຫຼາຍຄວາມຄິດເຫັນ ເຊິ່ງພວກເຮົາຈະໄດ້ນໍາໄປຈັດຕັ້ງຜັນຂະຫຍາຍເຂົ້າໃນກອງປະຊຸມໂຕະມົນ ປະຈໍາປີ 2024 ລວມທັງ ຮ່າງແນວຄວາມຄິດຂອງ ກອງປະຊຸມໂຕະມົນ ປະຈໍາປີ 2024 ທີ່ເປັນວຽກທີ່ສ□າຄັນ ໃນການກະກຽມໃຫ້ແກ່ ກອງປະຊຸມໂຕະມົນ ປະຈໍາປີ 2024 ແລະ ເສີມຂະຫຍາຍການເຮັດວຽກຮ່ວມກັນ ໃນກົນໄກຂອງຂະບວນການໂຕະມົນ ລະຫວ່າງ ລັດຖະບານ ແລະ ຄູ່ຮ່ວມພັດທະນາ ໂດຍສະເພາະບັນດາ ກອງເລຂາໜ່ວຍງານຂະແໜງການເພື່ອປຶກສາຫາລື ກັບຄູ່ຮ່ວມພັດທະນາ (SWGs) ເຊິ່ງມີບົດບາດສໍາຄັນ ໃນການປະກອບສ່ວນເຂົ້າໃນວຽກງານຂະບວນການໂຕະມົນ.

ສໍາລັບຄໍາຄິດເຫັນ ກ່ຽວກັບ ຮ່າງເບື້ອງຕົ້ນຂອງ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 10 (2026-2030) ທີ່ບັນດາທ່ານ ກໍຄືໜ່ວຍງານຂະແໜງການ ໄດ້ປະກອບ ໃນກອງປະຊຸມມື້ນີ້ ກໍ່ຄືຄໍາເຫັນ ທີ່ສົ່ງມາໃຫ້ແລ້ວນັ້ນ ກໍ່ຖືວ່າ ເປັນຄໍາຄິດເຫັນທີ່ດີ ແລະ ມີປະໂຫຍດຫລາຍ ຕໍ່ການຮ່າງແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ 10. ກອງເລຂາພວກເຮົາຈະສັງລວມ ເພື່ອປັບປຸງສະບັບຮ່າງເພື່ອສືບຕໍ່ ລາຍງານລັດຖະບານ ແລະ ສືບຕໍ່ປຶກສາຫາລື ກັບບັນດາ ກະຊວງ ຂະແໜງການ, ທ້ອງຖິ່ນ ລວມທັງຄູ່ຮ່ວມພັດທະນາ ແລະ ພາກສ່ວນກ່ຽວຂ້ອງ ໃນເວລາອັນເໝາະສົມ ເພື່ອກ້າວເຂົ້າສູ່ ການຮັບຮອງຈາກລັດຖະບານ ແລະ ສະພາແຫ່ງຊາດ ໃນທ້າຍປີ 2025.

ບັນດາທ່ານ ແຂກທີ່ມີກຽດ, ທ່ານຍິງທ່ານຊາຍ ທີ່ນັບຖື ແລະ ຮັກແພງ

ຂ້າພະເຈົ້າ ຂໍຖືໂອກາດນີ້ສະເໜີ ເນັ້ນໜັກ ບາງຈຸດເພີ່ມຕື່ມດັ່ງນີ້:

- ສະເໜີໃຫ້ ບັນດາກອງເລຂາໜ່ວຍງານຂະແໜງການ ສືບຕໍ່ຈັດກອງປະຊຸມໜ່ວຍງານຂະແໜງການຂອງຕົນເອງ, ພ້ອມດຽວກັນນີ້ ສະເໜີໃຫ້ສົ່ງແຜນວຽກປະຈຳປີ (AWP) ກໍ່ຄືບົດລາຍງານຄວາມຄືບໜ້າ ຂອງໜ່ວຍງານຂະ ແໜງການຕົນເອງ ໃຫ້ກະຊວງແຜນການ ແລະການລົງທຶນ (ກົມຮ່ວມມືສາກົນ ໃນນາມເປັນກອງເລຂາຄະນະຊີ້ນຳລະດັບຊາດເພື່ອຂະບວນການໂຕະມົນ) ຢ່າງເປັນປົກກະຕິ, ເພື່ອຈະໄດ້ເຮັດເປັນບົດລາຍງານຮັບໃຊ້ ກອງປະຊຸມໂຕະມົນ ປະຈຳປີ 2024;
- ການກະກຽມກອງປະຊຸມໂຕະມົນ ປະຈຳ 2024 ກໍ່ຍັບໃກ້ເຂົ້າມາແລ້ວ, ການຈັດຕັ້ງປະຕິບັດກິດຈະກຳຂອງໜ່ວຍງານຂະແໜງການ ກໍ່ຍັງເຫັນວ່າ ມີສິ່ງທ້າທາຍຫຼາຍດ້ານ ສະເໜີໃຫ້ບັນດາໜ່ວຍງານຂະແໜງການ ເອົາໃຈໃສ່ຈັດຕັ້ງປະຕິບັດ ບັນດາຍຸດທະສາດ ແລະແຜນວຽກບູລິມະສິດ ທີ່ຕິດພັນກັບຂະແໜງການຕົນ ໂດຍສະເພາະ ສິ່ງທີ່ໄດ້ປຶກສາຫາລື ໃນກອງປະຊຸມໂຕະມົນ ປີ 2024 ທີ່ຜ່ານມາ (ຊຶ່ງຈັດຂຶ້ນ ໃນວັນທີ 13 ກຸມພາ 2024);
- ສະເໜີໃຫ້ ໜ່ວຍງານຂະແໜງການ ຈົ່ງສືບຕໍ່ຈັດຕັ້ງຜັນຂະຫຍາຍແຈ້ງການຂອງ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບ ເລກທີ 868/ຫສນຍ ລົງວັນທີ 6 ພຶດສະພາ 2024 ກ່ຽວກັບທິດຊີ້ນຳຂອງ ນາຍົກລັດຖະມົນຕີ ໃນການຜັນຂະຫຍາຍຜົນຂອງກອງປະຊຸມໂຕະມົນ ປະຈຳປີ 2023.

ຂ້າພະເຈົ້າ ຕີລາຄາສູງ ແລະ ຊົມເຊີຍຕໍ່ກອງປະຊຸມຂອງພວກເຮົາໃນມື້ນີ້ ທີ່ໄດ້ດຳເນີນໄປດ້ວຍບັນຍາກາດອັນຟົດພື້ນ, ມີການແລກປ່ຽນຄຳຄິດຄຳເຫັນດ້ວຍຄວາມຮັບຜິດຊອບສູງ ແລະ ເຕັມໄປດ້ວຍເນື້ອໃນອັນຄົບຖ້ວນ ແລະ ປະສົບຜົນສຳເລັດຢ່າງຈົບງາມ.

ອີກເທື່ອໜຶ່ງ, ຂໍສະແດງຄວາມຂອບໃຈເປັນຢ່າງສູງ ມາຍັງ ທ່ານ **ບັກໂຄເດັຍ ເບີຄະນ໋ອຟ,** ຜູ້ປະສານງານອົງການສະຫະປະຊາຊາດ ປະຈຳ ສປປ ລາວ ທີ່ໄດ້ສະຫລະເວລາອັນມີຄຸນຄ່າຂອງ ທ່ານ ເຂົ້າຮ່ວມໃນກອງປະຊຸມ ທີ່ສຳຄັນໃນຄັ້ງນີ້.

ສະແດງຄວາມຂອບໃຈ ມາຍັງບັນດາທ່ານ ຮອງລັດຖະມົນຕີ, ທູດ, ອົງການຈັດຕັ້ງສາກົນ ຜູ້ຕາງໜ້ນຈາກບັນດາ ກະຊວງຂະແໜງການ ໂດຍສະເພາະ ກອງເລຂາຂອງໜ່ວຍງານຂະແໜງການເພື່ອປຶກສາຫາລືກັບຄູ່ຮ່ວມພັດທະນາ ທີ່ໄດ້ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ຢ່າງພ້ອມພຽງ.

ສຸດທ້າຍນີ້, ຂ້າພະເຈົ້າຂໍອວຍພອນໄຊອັນປະເສີດໃຫ້ ທ່ານປະທານຮ່ວມ ແລະ ບັນດາທ່ານຜູ້ແທນເຂົ້າຮ່ວມກອງປະຊຸມ ທັງໝົດ ຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມເບີກບານມ່ວນຊື່ນ ແລະ ປະສົບຜົນສຳເລັດອັນຫຍິ່ງໃຫຍ່ ໃນໜ້າທີ່ວຽກງານຂອງບັນດາທ່ານ.

ນະໂອກາດນີ້ ຂ້າພະເຈົ້າຂໍກ່າວປິດ ກອງປະຊຸມນັບແຕ່ເວລານີ້ເປັນຕົ້ນໄປ.

**ຂໍຂອບໃຈ**